ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 2588 /ກປ

ນະຄອນຫຼວງວຽງຈັນ, ວັນທີ 0 6 MAY 2010

# ຄຳແນະນຳ

## ຂອງລັດຖະມົນຕີ

## ກ່ຽວກັບ ການຂະຫຍາຍກະເສດສຸມ

## ເຮັດນາປູກເຂົ້າດ້ວຍການນຳໃຊ້ກ້າກົບດຽວຢ່າງກວ້າງຂວາງ

ເຖິງ: - ຫົວໜ້າຫ້ອງການ, ກົມ, ກອງ, ສະຖາບັນ ອ້ອມຂ້າງກະຊວງກະສິກຳ ແລະ ປ່າໄມ້;

- ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ປະຈຳ ແຂວງ ແລະ ນະຄອນຫຼວງ.

- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007;
- ອີງຕາມກອງປະຊຸມຖອດຖອນບົດຮຽນການຈັດຕັ້ງປະຕິບັດການປູກເຂົ້າແບບກະເສດສຸມດຳນາ ກ້າກົບດຽວທົ່ວປະເທດ ທີ່ ນະຄອນຫຼວງວຽງຈັນ ຄັ້ງວັນທີ 04 ມີນາ 2010.

ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຜັນຂະຫຍາຍແນວທາງນະໂຍບາຍໃຫ້ເປັນອັນລະອຽດ, ຊຶ່ງໄດ້ກຳນົດເອົາ 4 ເປົ້າໝາຍ ແລະ 13 ມາດຕະການ ເພື່ອສ້າງແຜນງານ, ແຜນການ ແລະ ໂຄງການພັດທະນາຂະແໜງກະສິກຳ ຢ່າງຮອບດ້ານ ເພື່ອຫັນປ່ຽນການຜະລິດແບບທຳມະຊາດ-ເຄິ່ງທຳມະຊາດໄປສູ່ການຜະລິດ ທີ່ກ້າວໜ້າທັນສະໄໝ ເທື່ອລະກ້າວ, ຜະລິດເປັນສິນຄ້າ ສຳລັບບໍລິໂພກພາຍໃນ ແລະ ສົ່ງອອກ ຕາມທິດເພິ່ງຕົນເອງ ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ. ທັງໝົດນີ້ກໍເພື່ອ ປະກອບສ່ວນປົດປ່ອຍຊາວກະສິກອນອອກຈາກຄວາມທຸກຍາກ ຮັບປະກັນດ້ານສະບຽງອາຫານ ແລະ ນຳເອົາປະເທດຊາດໄປສູ່ຄວາມເຂັ້ມແຂງ ປະຊາຊົນຮັ່ງມີ ສັງຄົມສີວິໄລ ເທື່ອລະກ້າວ.

ກະເສດສຸມປູກເຂົ້າໃຊ້ກ້າກົບດຽວ ແມ່ນເຕັກນິກການປູກເຂົ້າທີ່ມີປະສິດທິພາບ ຊຶ່ງໄດ້ຜ່ານການທົດລອງ ແລະ ນຳໃຊ້ຢູ່ຫຼາຍປະເທດ, ການນຳໃຊ້ເຕັກນິກດັ່ງກ່າວໄດ້ສະຫລຸບວ່າ: ເຂົ້າແຕກກໍດີ, ບົວລະບັດຮັກສາງ່າຍ, ໃຊ້ນ້ຳນ້ອຍ, ໃຫ້ຜົນຜະລິດຕໍ່ເນື້ອທີ່ສູງກວ່າການເຮັດແບບພື້ນເມືອງ. ຢູ່ ສປປ ລາວ ໄດ້ມີການນຳເອົາເຕັກນິກນີ້ເຂົ້າມາທົດລອງນຳໃຊ້ ນັບແຕ່ປີ 2001 ໂດຍເລີ່ມຕົ້ນຢູ່ 2 ເມືອງ ໃນເນື້ອທີ່ 500 ມ$^2$. ຜົນການທົດລອງໄດ້ສະແດງໃຫ້ເຫັນວ່າ ການປູກເຂົ້າດ້ວຍກ້າກົບດຽວແມ່ນມີປະສິດທິພາບສູງກວ່າການເຮັດນາແບບດັ້ງເດີມຕັ້ງຫລາຍເທົ່າ ເປັນຕົ້ນ ດ້ານຜົນຜະລິດ, ການໃຊ້ແຮງງານ, ການໃຊ້ນ້ຳ ແລະ

ຕົ້ນທຶນການຜະລິດຕໍ່າ ແລະ ໄດ້ຮັບຄວາມສົນໃຈຢ່າງກວ້າງຂວາງ ທັງໃນລະດັບມະຫາພາກ ແລະ ຈຸລະພາກ. ຈາກຜົນສໍາເລັດດັ່ງກ່າວ, ຈຶ່ງໄດ້ມີການເຜີຍແຜ່ເຕັກນິກດັ່ງກ່າວໄປສູ່ຫລາຍແຂວງ ແລະ ຫລາຍທ້ອງຖິ່ນໃນທົ່ວປະເທດ ເຊັ່ນ: ແຂວງ ວຽງຈັນ, ສາລະວັນ, ຄໍາມ່ວນ, ຫົວພັນ, ຊຽງຂວາງ, ຫຼວງພະບາງ, ໄຊຍະບູລີ ແລະ ນະຄອນຫຼວງວຽງຈັນ. ສໍາລັບລະດູແລ້ງ ສົກປີ 2009-2010 ມີ 9.063 ຄອບຄົວເຂົ້າຮ່ວມ ເຮັດກະເສດສຸມປູກເຂົ້າໃຊ້ກ້າກົບດຽວ ໃນເນື້ອທີ່ 3.768 ເຮັກຕາ ແລະ ສໍາລັບລະດູຝົນປີ 2010 ຈະສູ້ ຊົນໃຫ້ໄດ້ 5.000 ເຮັກຕາ.

ເພື່ອສືບຕໍ່ຜັນຂະຫຍາຍກະເສດສຸມ ປູກເຂົ້າດ້ວຍກ້າກົບດຽວ ເຂົ້າໃນລະບົບການປູກເຂົ້າ ຂອງຊາວກະສິກອນໃນທົ່ວປະເທດເທື່ອລະກ້າວ,

## ລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ຈຶ່ງອອກຄໍາແນະນໍາດັ່ງນີ້:

1. ໃຫ້ບັນດາກົມ, ກອງ, ສະຖາບັນ ແລະ ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ແລະ ນະຄອນຫຼວງ ເພີ່ມທະວີຄວາມເອົາໃຈໃສ່ ຢ່າງຕັ້ງໜ້າ ໃນການຈັດຕັ້ງຜັນຂະຫຍາຍເຕັກນິກການເຮັດກະເສດສຸມປູກເຂົ້າໃຊ້ກ້າກົບດຽວ ໃຫ້ຊາວກະສິກອນ ຢ່າງທົ່ວເຖິງ ໂດຍໃຫ້ມີການຈັດຕັ້ງການຝຶກອົບຮົມ, ສໍາມະນາ, ແລກປ່ຽນບົດຮຽນ ແລະ ອື່ນໆ.
2. ໃຫ້ແຕ່ງຕັ້ງຄະນະຊີ້ນໍາຂັ້ນສູນກາງ ເພື່ອຊີ້ນໍາ, ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການເຮັດກະເສດສຸມປູກເຂົ້າກ້າກົບດຽວ ໂດຍມອບໃຫ້ ກົມປູກຝັງ, ກົມຊົນລະປະທານ ແລະ ກອງສົ່ງເສີມເປັນໃຈກາງໃນການປະສານງານຈັດຕັ້ງຄະນະດັ່ງກ່າວ.
3. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ແລະ ນະຄອນຫຼວງ ແຕ່ງຕັ້ງຄະນະຊີ້ນໍາຂັ້ນແຂວງແລະນະຄອນຫຼວງ ໂດຍມອບໃຫ້ ຫົວໜ້າພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງ ເປັນໃຈກາງໃນການປະສານສົມທົບກັບຂະແໜງການ ທີ່ກ່ຽວຂ້ອງ ຂອງທ້ອງຖິ່ນ, ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ເພື່ອແຕ່ງຕັ້ງຄະນະດັ່ງກ່າວ.
4. ໃຫ້ຄະນະຊີ້ນໍາຂັ້ນແຂວງ ແລະ ນະຄອນຫຼວງ ເປັນເຈົ້າການລົງເກັບກໍາສະພາບລວມ ແລະ ທ່າແຮງຂອງທ້ອງຖິ່ນ ເພື່ອສ້າງເປັນແຜນການ ແລະ ຄັດເລືອກຜູ້ສະໝັກ ຫຼື ຄອບຄົວເປັນຕົວແບບຂອງບ້ານ, ກຸ່ມບ້ານ ຈັດຕັ້ງຜັນຂະຫຍາຍ ໂດຍການຈັດຕັ້ງຝຶກອົບຮົມ, ສໍາມະນາ, ເຮັດ "ໂຮງຮຽນຊາວກະສິກອນ" ແລະ ອື່ນໆ ໂດຍໃຫ້ແທດເໝາະກັບສະພາບ ເງື່ອນໄຂຕົວຈິງ ຂອງທ້ອງຖິ່ນ.
5. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ປະຈໍາແຂວງ ແລະ ນະຄອນຫຼວງ ຊີ້ນໍາຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ເພື່ອຕິດຕາມ, ຊຸກຍູ້, ແນະນໍາເຕັກນິກ ຢ່າງເປັນປະຈໍາ ແລະ ຈັດຕັ້ງຊາວກະສິກອນ ຖອດຖອນບົດຮຽນກັບທີ່ ທັງຮຽນທັງເຮັດດ້ວຍຮູບການຈັດຕັ້ງ "ໂຮງຮຽນຊາວກະສິກອນ" ແລະ ທັດສະນະສຶກສາ ພ້ອມທັງນໍາເອົາເຕັກນິກດັ່ງກ່າວ ເຂົ້າໃນຫລັກສູດ ຂອງສູນບໍລິການເຕັກ ນິກ ເພື່ອຊຸກຍູ້ສົ່ງເສີມການເຮັດກະເສດສຸມປູກເຂົ້າກ້າກົບດຽວຢູ່ກຸ່ມບ້ານ.
6. ໃຫ້ພະແນກກະສິກໍາ ແລະ ປ່າໄມ້ ປະຈໍາແຂວງ ແລະ ນະຄອນຫຼວງ ເປັນເຈົ້າການລາຍງານຄວາມຄືບໜ້າ ການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ເປັນລາຍເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີໃຫ້ຄະນະຊີ້ນໍາຂັ້ນສູນກາງຢ່າງປົກກະຕິ ເພື່ອສັງລວມເປັນບົດລາຍງານໃຫ້ການນໍາກະຊວງຊາບ.

7. ພາຍຫຼັງເກັບກ່ຽວມ້ຽນມັດແລ້ວ ໃຫ້ພະແນກກະສິກຳ ແລະ ປ່າໄມ້ປະຈຳແຂວງ ແລະ ນະຄອນຫຼວງເປັນເຈົ້າການ ຈັດຕັ້ງສະຫຼຸບປະເມີນຜົນ ຖອດຖອນບົດຮຽນ ພ້ອມທັງວາງແຜນຊຸກຍູ້ ແລະ ຂະຫຍາຍໃນລະດູການຕໍ່ໄປ.
8. ໃຫ້ຄະນະຊີ້ນຳຂັ້ນສູນກາງ, ຄະນະຊີ້ນຳຂັ້ນແຂວງ ແລະ ນະຄອນຫຼວງ ຕິດຕາມເກັບກ່ຽວເອົາຜົນງານດີເດັ່ນຂອງພະນັກງານແຕ່ລະຂັ້ນ ແລະ ຄອບຄົວຊາວກະສິກອນຕົວແບບ ເພື່ອນຳສະເໜີຂັ້ນເທິງຍ້ອງຍໍ ຢ່າງເໝາະສົມ.
9. ໃຫ້ຄະນະຮັບຜິດຊອບແຕ່ລະຂັ້ນ (ສູນກາງ ແລະ ທ້ອງຖິ່ນ) ທັນເອົາວຽກນີ້ສ້າງເປັນໂຄງການ ແລະ ແຜນວຽກບູລິມະສິດຂອງຕົນຄືວຽກປົກກະຕິອື່ນໆ ເພື່ອກະຕຸກຊຸກຍູ້ຈັດຕັ້ງປະຕິບັດ ຢ່າງກວ້າງຂວາງ.
10. ພາຍຫລັງໄດ້ຮັບຄຳແນະນຳສະບັບນີ້ແລ້ວໃຫ້ທຸກພາກສ່ວນພ້ອມກັນດຳເນີນການກະກຽມ ຈັດຕັ້ງປະຕິບັດແຕ່ຫົວທີ ເພື່ອໃຫ້ທັນລົງມືເຮັດກະເສດສຸມກ້າກົບດຽວນັບແຕ່ລະດູຝົນປີນີ້ເປັນຕົ້ນໄປ. ຖ້າມີບັນຫາໃດບໍ່ທັນຈະແຈ້ງ ໃຫ້ພົວພັນກັບກົມປູກຝັງ, ຊົນລະປະທານ ແລະ ກອງສົ່ງເສີມໂດຍກົງ (ຄະນະຮັບຜິດຊອບຊຸກຍູ້ກະເສດສຸມປູກເຂົ້າກ້າກົບດຽວ).
11. ມອບໃຫ້ກົມປູກຝັງ, ກົມຊົນລະປະທານ ແລະ ກອງສົ່ງເສີມເປັນໃຈກາງໃນການຕິດຕາມ ສັງລວມສະຫລຸບ ວິໃຈບັນຫາຮອບດ້ານ ເພື່ອສັງລວມສະພາບການຈັດຕັ້ງປະຕິບັດ ການເຮັດກະເສດສຸມປູກເຂົ້າໃຊ້ກ້າກົບດຽວລາຍງານຄະນະນຳກະຊວງເປັນປົກກະຕິ.

ດັ່ງນັ້ນ, ຈິ່ງແນະນຳມາ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ ດ້ວຍຄວາມຮັບຜິດຊອບສູງ.

**ລັດຖະມົນຕີວ່າການ ກະຊວງ ກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

**ສິຕາເຮັ່ງ ຣາຊະພົນ**

<u>ບ່ອນນຳສົ່ງ:</u>

1. ຫ້ອງວ່າການສູນກາງພັກ ເພື່ອຊາບ
2. ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອຊາບ
3. ຫ້ອງການຄະນະເລຂາທິການລັດຖະບານ ເພື່ອຊາບ
4. ຫ້ອງວ່າການປົກຄອງນະຄອນຫຼວງ/ແຂວງ ບ່ອນລະ 1ສະບັບ ເພື່ອຊາບ
5. ເກັບມ້ຽນ 1 ສະບັບ